ພຣະຄຳພີສຳລັບຫຼານນ້ອຍ

ສະເໜີ

# ພຣະກຳເນີດ ຂອງພຣະເຢຊູ



ຂຽນໂດຍ: Edward Hughes

ແຕ້ມຮູບໂດຍ: M. Maillot; Alastair Paterson

ດັດແກ້ໂດຍ: E. Frischbutter; Sarah S.

ແປໂດຍ: Christian Lingua

ຈັດພິມໂດຍ: Bible for Children
www.M1914.org

©2020 Bible for Children, Inc.
ໃບອະນຸຍາດ: ທ່ານສາມາດອັດສຳເນົາ ຫຼືຕີພິມເລື່ອງນີ້ໄດ້
ແຕ່ຫ້າມເຮັດເພື່ອຈຳໜ່າຍເດັດຂາດ

ດົນນານມາແລ້ວ, ພຣະເຈົ້າໄດ້
ສົ່ງທູດສະຫວັນຄັບບຣິເອນໄປ
ຫາຍິງສາວພົມມະຈັນຊາວຢືວ
ຄົນໜຶ່ງຊື່ ນາງ ມາຣີ.





ພຣະອົງໄດ້ຊົງກ່າວແກ່ນາງວ່າ,
"ເຈົ້າຈະໃຫ້ກຳເນີດບຸດຊາຍ ແລະ
ຈົ່ງເອີ້ນນາມຊື່ເພິ່ນວ່າ ເຢຊູ.
ເພິ່ນ ຈະຖືກເອີ້ນວ່າ
ເປັນພຣະບຸດ ຂອງພຣະ
ເຈົ້າອົງສູງສຸດ.
ພຣະອົງຈະ ຊົ ຄອງຣາດ
ຕະຫຼອດໄປ
ເປັນນິດ."

ມາຣີກໍປະຫຼາດໃຈຫຼາຍ ແລະກ່າວວ່າ, “ເຫດການ
ນີ້ຈະເກີດຂຶ້ນໄດ້ແນວໃດ ເaພາະຂ້ານ້ອຍຍັງບໍ່ໄດ້
ຫຼັບນອນນຳຊາຍໃດເລີຍ.” ທູດສະຫວັນຊິງກ່າວ
ແກ່ນາງວ່າ ບຸດນັ້ນ ຈະເປັນມາ ແຕ່ພຣະເຈົ້າ

ຊິ່ງ ຈໍາເປັນ
ຕ້ອງມີພໍ່ທີ່
ເປັນມະນຸດ.



ຫຼັງຈາກນັ້ນ ທູດສະຫວັນກໍໄດ້ໄປຫາ
ພີ່ນ້ອງຂອງນາງ ມາຣີ ຄືນາງ ເອລີຊາ
ເບັດ ເພື່ອບອກວ່ານາງກໍ
ກຳລັງຈະໃຫ້ກຳເນີດ
ບຸດຊາຍຄືກັນ
ເຖິງແມ່ນວ່າ
ນາງຈະອາຍຸຫຼາຍ
ແລ້ວກໍຕາມ.



ອັນນີ້ກໍເປັນເຫດການອັດສະຈັນດ້ວຍ.
ຫຼັງຈາກນັ້ນບໍ່ດົນ, ມາຣີຈຶ່ງໄດ້ໄປຢ້ຽມ
ນາງ ເອລີຊາເບດ.
ພວກເຂົາຕາງກ
ພາກັນ
ສັນລະເສີນພຣະ
ເຈົ້າ.



ນາງ ມາຣີ ໄດ້ຕົກລົງໝັ້ນ
ໝ າຍທີ່ຈະແຕ່ງງານກັບ
ຊາຍ ຄົນໜຶ່ງທີ່ຊື່
ໂຢເຊບ. ຝ່າຍໂຢເຊບກໍ
ເສຍໃ ຈຫຼາຍ
ພາຍຫຼັງທີ່ຮູ້
ວ່າ ນາງ ມາຣີ
ໄດ້ຖືພາ. ລາວຄິດ
ວ່າຄົງແມ່ນຊາຍອື່ນ
ທີ່ເປັນພໍ່ຂອງເດັກ.



ທູດສະຫວັນຂອງພຣະເຈົ້າໄດ້ເຂົ້າຝັນໂຢເຊບ
ເພື່ອບອກລາວວ່າເດັກທີ່ຈະເກີດມານັ້ນ
ແມ່ນພຣະບຸດຂອງພຣະເຈົ້າ ແລະໄດ້
ບອກໃຫ້ໂຢເຊບຊ່ອຍນາງ ມາຣີ
ລ້ຽງດູພຣະກຸມມານດ້ວຍ.



ໂຢເຊບໄວ້ວາງໃຈ ແລະເຊື່ອຟັງພຣະເຈົ້າ. ນອກນັ້ນ ຍັງເປັນການ ປະຕິບັດຕາມ ກົດໝາຍຂອງ ບ້ານເມືອງດ້ວຍ, ...



... ເພາະຕອນນັ້ນມີກົດໝາຍສະບັບໃໝ່ອອກ
ມາ ເຮັດໃຫ້ໂຢເຊບ ແລະນາງ
ມາຣີ ຕ້ອງໄດ້ເດີນທາງ
ໄປຈ່າຍພາສີທີ່



ບ້ານເກີດເມືອງນອນຂອງຕົນຄື ເບດເລເຮມ.


ນາງ ມາຣີ ແມ່ນຢູ່ໃນ
ຊ່ວງຂອງເດືອນຄອງ
ແລ້ວ ຄືໃກ້ຈະຮອດ
ກໍານົດໃຫ້
ກໍາເນີດ
ແກ່ພຣະ
ກຸມມານ
ແລ້ວ.


ແຕ່ໂຢເຊບບໍ່
ສາມາດຫາຫ້ອງ
ພັກໄດ້. ໂຮງແຮມ
ທຸກຫ້ອ
ງເຕັມໝົດ.

ໃນທີ່ສຸດ ໂຢເຊບກໍພົບຄອກມ້າແຫ່ງໜຶ່ງ. ພຣະ
ກຸມມານໄດ້ເກີດໃນທີ່ນັ້ນ.



ມານດາຂອງພຣະອົງໄດ້ພັນພຣະອົງໄວ້ເທິງຮາງຫຍ້າ, ບ່ອນທີ່ພວກເຂົາໃຊ້ເປັນບ່ອນ ໃຫ້ອາຫານແກ່ໂຕສັດ.




ໃກ້ໆນັ້ນ ມີພວກລ້ຽງແກະພວມນອນເຝົ້າຝູງ
ແກະຂອງຕົນຢູ່. ທູດສະຫວັນ
ຂອງພຣະ
ເຈົ້າໄດ້ປະກົດ
ແລະບອກ
ພວກເຂົາ
ຂ່າວອັນປະເສີດນີ້.


“ວັນນີ້ ພຣະຜູ້ຊົງໂຜດໃຫ້ພົ້ນອົງໜຶ່ງຄືພຣະຄຣິດ
ເຈົ້າ ໄດ້ມາບັງເກີດໃນເມືອງດາວິດ
ສຳລັບເຈົ້າທັງຫຼາຍ.
ພວກເຈົ້າ
ຈະພົບພຣະ
ກຸມມານ
ນອນໃນຮາງຫຍ້າ.”

ໃນທັນໃດນັ້ນ ກໍມີທູດສະຫວັນຫຼາຍອົງມາປາກົດ,
ກ່າວຮ້ອງສັນລະເສີນພຣະເຈົ້າວ່າ,




... "ພຣະລັດສະໝີຈົ່ງມີແກ່ພຣະເຈົ້າໃນທີ່ສູງສຸດ
ແລະທີ່ແຜ່ນດິນໂລກຈົ່ງມີ
ສັນຕິສຸກ ແກ່
ມະນຸດ
ທັງປວງ ທີ່ພຣະ
ອົງຊົງຊອບພຣະ
ໄທນັ້ນ."

ພວກຜູ້ລ້ຽງແກະກໍພ້າວພາກັນ
ແລ່ນໄປທີ່ຄອກມ້າ.



ຫຼັງຈາກໄດ້ພົບກັບພຣະກຸມມານແລ້ວ
ພວກເຂົາກໍແລ່ນໄປບອກທຸກຄົນທີ່ຕົນເອງພົບ
ເຫັນ ກ່ຽວກັບສິ່ງທີ່ທູດສະຫວັນໄດ້ກ່າວເຖິງ
ເລື່ອງພຣະເຢຊູ.





ອີກສີ່ສິບວັນຕໍ່ມາ, ໂຢເຊບ
ແລະມາຣີ ກໍໄດ້ພາພຣ
ກຸມມານເຢຊູໄປ
ຍັງພຣະວິຫານໃນ
ກຸງເຢຣູຊາເລັມ. ໃນ
ທີ່ນັ້ນ ມີຊາຍຄົນ
ໜຶ່ງຊື່ ຊີໂມນ ແລະ
ອີກຜູ້ໜຶ່ງຊື່ ນາງ
ອານາ ຊຶ່ງເປັນຜູ້
ຮັບໃຊ້ອົງພຣະຜູ້
ເປັນ ເຈົ້າ, ...



...ກໍໄດ້ກ່າວ
ສັນລະເສີນພຣະ
ເຈົ້າເມື່ອພວກຕົນ
ໄດ້ເຫັນພຣະ
ກຸມມານ, ທັງສອງ
ຄົນຮູ້ຈັກວ່າ ພຣະ
ເຢຊູຊົງເປັນພຣະ
ບຸດຂອງພຣະເຈົ້າ,
ພຣະຜູ້ຊົງໂຜດໃຫ້
ພົ້ນທີ່ສັນຍາວ່າຈະ
ສະເດັດມານັ້ນ.



ໂຢເຊບໄດ້ຖວາຍນົກສອງໂຕ.
ອັນນີ້ແມ່ນເພິ່ນເຮັດຕາ
ມພຣະບັນຍັດ
ຂອງພຣະເຈົ້າທີ່ລະບຸ
ໄວ້ສຳລັບຄົນທຸກຍາກ
ເມື່ອເຂົາເຈົ້າເອົາ
ລູກນ້ອຍມາຖວາຍ
ແກ່ພຣະເຈົ້າ
ພວກເຂົາຕ້ອງນຳເອົາ
ນົກສອງໂຕມານຳ.



ຕໍ່ມາ, ກໍມີດາວພິເສດນຳໂຫລາ
ຈານຈາກພາກຕາເວັນ
ອອກຂອງປະເທດມາຍັງ
ກຸງເຢຣູຊາເລັມ.

ພວກເຂົາຖາມ
ປະຊາຊົນມາເລື້ອຍວ່າ, “ພຣະ
ອົງ ຜູ້ທີ່ບັງເກີດມາເປັນກະສັດ
ຂອງຊາດຢິວນັ້ນ ຢູ່ທີ່ໃດ? ພວກ
ເຮົາປະສົງທີ່ຈະຂາບໄຫວ້ເພິ່ນ.”

ກະສັດເຮໂຣດໄດ້ຍິນເລື່ອງ
ພວກໂຫ  ລາຈານ.
ບັນຫາກໍບັງເກີດ,
ເມື່ອພຣະອົງບອກພວກ
ໂຫລາຈານວ່າໃຫ້ບອກ
ຕິນທັນທີທີ່ພິບພຣະ
ກຸມມານນັ້ນ.



ເຮໂຣດກ່າວວ່າ,
"ເຮົາກໍຢາກໄປຂາບໄຫວ້
ເພິ່ນເໝືອນກັນ."
ແຕ່ເຮໂຣດເວົ້າຕົວະ.
ເຮໂຣດຕ້ອງການ
ຂ້າພຣະອົງເຢຊູຖິ້ມເສຍ.




ດວງດາວນັ້ນໄດ້ນຳໂຫລາຈານໄປຍັງບ່ອນທີ່ມາຣີ
ແລະໂຢເຊບ ພັກອາໃສຢູ່ກັບພຣະກຸມມານ.
ພວກເຂົາກໍພາກັນກົ້ມຂາບ
ແລະຖວາຍຂອງຂວັນ
ອັນລຳ◌້ ຄ່າເຊັ່ນ
ເງິນຄຳ ແລະນຳ◌້
ຫອມ ແກ່ພຣະ
ກຸມມານ
ເຢຊູ.

ພຣະເຈົ້າໄດ້ເຂົ້າຝັນ
ເຕືອນພວກໂຫລາຈານ
ໃຫ້ກັບໄປທາງອື່ນເສຍ.
ຝ່າຍເຮໂຣດໃຈຮ້າຍຫຼາຍ.



ດ້ວຍຄວາມມຸ່ງໝັ້ນທີ່ຈະ
ຂ້າພຣະເຢຊູໃຫ້ໄດ້,
ຜູ້ປົກຄອງທີ່ຊົ່ວຮ້າຍນີ້
ໄດ້ສັ່ງຂ້າເດັກນ້ອຍຜູ້ຊາຍ
ທຸກຄົນໃນເມືອງ
ເບດເລເຮັມ.





ແຕ່ເຮໂຣດບໍ່ສາມາດເຮັດຮ້າຍອັນໃດແກ່ພຣະບຸດຂອງພຣະເຈົ້າໄດ້! ໂຢເຊບໄດ້ຮັບຄຳເຕືອນທາງຄວາມຝັນ, ເພິ່ນຈຶ່ງລຸກຂຶ້ນພາມາຣີ ແລະໂຢເຊບອອກ ເດີນທາງໄປຍັງ ປະເທດເອຢິບ.

ເມື່ອເຮໂຣດສິ້ນພຣະ
ຊິນແລ້ວ ໂຢເຊບກໍ
ໄດ້ພາມາຣີ ແລະພຣະ
ກຸມມານ



ເຢຊູກັບໄປ
ຍັງປະເທດເອຢິບ.
ພວກເຂົາອາໃສຢູ່ໃນເມືອງນ້ອຍໆ
ທີ່ມີຊື່ວ່າ ນາຊາເຣັດ, ໃກ້ກັບທະເລຄາລີ

ພຣະກຳເນີດຂອງພຣະເຢຊູ

ເລື່ອງໜຶ່ງຈາກພຣະຄໍາຂອງພຣະເຈົ້າ, ພຣະຄໍາພີ,

ທີ່ສາມາດພົບໄດ້ໃນ

ມັດທາຍ ບົດທີ 1-2, ລູກາ ບົດທີ 1-2

“ຄໍາສອນຂອງພຣະອົງໃຫ້ແສງສະຫວ່າງ.”
ເພງສັນລະເສີນ 119:130

ຈົບບໍລິບູນ

ເລື່ອງລາວໃນພຣະຄຳພີຕອນນີ້ບອກພວກເຮົາກ່ຽວກັບພຣະເຈົ້າ
ຜູ້ວິເສດ ຜູ້ທີ່ສ້າງພວກເຮົາ
ແລະຢາກໃຫ້ພວກຫຼານຮູ້ຈັກກັບພຣະເຈົ້າດ້ວຍ.

ພຣະເຈົ້າຊົງຮູ້ວ່າ ພວກເຮົາໄດ້ເຮັດການຊົ່ວຫຼາຍຢ່າງ
ຊຶ່ງພຣະອົງເອີ້ນວ່າ ຜິດບາບ. ບົດລົງໂທດຂອງຄວາມບາບຄື
ຄວາມຕາຍ. ແຕ່ພຣະເຈົ້າຊົງຮັກຫຼານຫຼາຍ ຈົນໄດ້ສົ່ງພຣະບຸດອົງ
ດຽວຂອງພຣະອົງລົງມາ, ຄືພຣະເຢຊູ, ໃຫ້ມາຕາຍທີ່ໄມ້ກາງແຂນ
ແລະຮັບໂທດບາບແທນເຮົາ. ຫຼັງຈາກນັ້ນ ພຣະອົງກໍເປັນຄືນມາ
ຈາກຕາຍ
ແລະສະເດັດຄືນສູ່ເຮືອນຂອງພຣະອົງຄືຟ້າສະຫວັນ! ຖ້າຫຼານເຊື່ອ
ໃນພຣະເຢຊູ ແລະຂໍການອະໄພໂທດບາບຈາກພຣະອົງ, ພຣະອົງ
ຈະຊົງຍົກໂທດໃຫ້ແນ່ນອນ! ພຣະອົງຈະສະເດັດມາປະທັບໃນຊີວິດ
ຂອງຫຼານທັນທີ, ແລະຫຼານຈະໄດ້ຢູ່ນຳພຣະອົງຕະຫຼອດໄປ
ເປັນນິດ

ຖ້າຫຼານເຊື່ອວ່າອັນນີ້ແມ່ນຄວາມຈິງແທ້,
ກໍ່ໃຫ້ອະທິຖານກັບພຣະເຈົ້າຕາມນີ້:
ຂ້າແດ່ພຣະເຢຊູ, ຂ້ານ້ອຍເຊື່ອວ່າພຣະອົງຊົງເປັນພຣະເຈົ້າ
ແລະໄດ້ບັງເກີດມາເປັນມະນຸດຕາຍທີ່ໄມ້ກາງແຂນແທນຜິດບາບ
ຂອງຂ້ານ້ອຍ ແລະບັດນີ້ພຣະອົງໄດ້ຊົງເປັນຄືນມາອີກຄັ້ງ.
ຂໍຊົງສະເດັດມາປະທັບໃນຊີວິດຂອງຂ້ານ້ອຍ
ແລະຍົກໂທດຜິດບາບຂອງຂ້ານ້ອຍ,
ຂໍຊົງປະທານຊີວິດໃໝ່ໃຫ້ແກ່ຂ້ານ້ອຍດ້ວຍໃນເວລານີ້
ເພື່ອວັນໜຶ່ງຂ້ານ້ອຍຈະໄດ້ຢູ່ນຳພຣະອົງຕະຫຼອດໄປເປັນນິດ.
ຂໍຊົງຊ່ວຍຂ້ານ້ອຍໃຫ້ເຊື່ອຟັງພຣະອົງ
ແລະມີຊີວິດຢູ່ເພື່ອພຣະອົງ ເປັນລູກ. ອາແມນ.

ຈົ່ງອ່ານພຣະຄຳພີ ແລະສົນທະນານຳພຣະເຈົ້າທຸກວັນ!
ໂຢຮັນ 3:16